ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

LAO WORLD
PUBLIC COMPANY

ບໍລິສັດລາວເວີ ມະຫາຊົນ
ອາຄານລາວໄອເຕັກ, ຖະນົນກຳແພງເມືອງ
ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ
ໂທ 021 41 5477, ແຟັກ 021 41 5409

ເລກທີ 239-/23-/ລວມຊ
ວັນທີ 28 MAR 2023

ຮຽນ : ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ
: ທ່ານຜູ້ອຳນວຍການໃຫຍ່ຕະຫລາດຫລັກຊັບລາວ
: ທ່ານຜູ້ຖືຮຸ້ນຂອງບໍລິສັດ ລາວເວີ ມະຫາຊົນ

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມຂອງສະພາບໍລິຫານ ຄັ້ງວັນທີ 28 ມີນາ 2023

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບວ່າດ້ວຍລະບຽບການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງວັນທີ 07 ມັງກອນ 2011.

ບໍລິສັດລາວເວີນມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ບໍລິສັດລາວເວີນມະຫາຊົນ ເຊິ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1: ເຫັນດີ ແລະ ຮັບຮອງເອົາບົດບັນທຶກຂອງກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021.

ວາລະທີ 2: ເຫັນດີ ແລະ ຮັບຮູ້ກ່ຽວກັບຮ່າງສຸດທ້າຍຂອງ ບົດລາຍງານການເງິນລວມສຳລັບປີ 2022 ທີ່ສິ້ນສຸດລົງໃນ ວັນທີ 31 ທັນວາ 2022. ສະພາບໍລິຫານມີຄຳເຫັນວ່າ ເນື້ອໃນສຳຄັນຂອງຮ່າງສຸດທ້າຍຂອງບົດລາຍງານການເງິນລວມ ນີ້ ຈະບໍ່ມີຄວາມແຕກຕ່າງຫຍັງຫລາຍກັບສະບັບສຸດທ້າຍທີ່ໄດ້ຮັບການກວດສອບ ໂດຍບັນກວດສອບບັນຊີພາຍ ນອກຈາກ ບໍລິສັດເອີນແອນຢັ້ງລາວ ຈຳກັດ. ບົດລາຍງານການເງິນລວມສະບັບສຸດທ້າຍຈະຖືກນຳສະເໜີໃນກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງເອົາ.

ວາລະທີ 3: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ບໍລິສັດ ພຣາຍສວໍເຕີເຮົ້າກຸບເປີ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບ ພາຍນອກ ປະຈຳປີ 2023.

Scanned with CamScanner

ວາລະທີ 4: ເຫັນດີ ແລະ ຮັບຮອງເອົາການຂຶ້ນເງິນເດືອນໃຫ້ກັບພະນັກງານບໍລິສັດລາວເວີນມະຫາຊົນທີ່ມີຂຶ້ນຕ່ຳ ແໜ່ງຕັ້ງແຕ່ລະດັບຫົວໜ້າພະແນກລົງໄປ ເພື່ອເປັນການສົມທົບຊ່ວຍເຫລືອພະນັກງານຕ່ຳກັບການປ່ຽນແປງຂອງຄ່າຄອງຊີບ. ອັດຕາຂຶ້ນເງິນເດືອນສະເລ່ຍແມ່ນ 10% ທຽບໃສ່ເງິນເດືອນພື້ນຖານປະຈຸບັນ.

ວາລະທີ 5: ເຫັນດີ ແລະ ຮັບຮອງເອົາ ແຜນປະຕິບັດງານປະຈຳປີ 2023 ຂອງບໍລິສັດລາວເວີນມະຫາຊົນ. ແຜນປະຕິບັດງານດັ່ງກ່າວ ຈະຖືກນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງເອົາ.

ວາລະທີ 6: ເຫັນດີ ແລະ ຮັບຮອງເອົາ ການຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ນຳສະເໜີຕໍ່ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງເອົາ.

ວາລະທີ 7: ເຫັນດີ ແລະ ຮັບຮອງເອົາ ການຈັດສັນກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ກຳນົດໄວ້ໃນກົດໝາຍ ແລະ ຈ່າຍເງິນປັນຜົນ ແລະ ນຳສະເໜີຕໍ່ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນປະຈຳປີ 2022 ເພື່ອພິຈາລະນາ ແລະ ຮັບຮອງເອົາ.

ວາລະທີ 8: ກຳນົດວາລະຂອງກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1) ວາລະທີ 1: ລາຍງານຜົນໄດ້ຮັບຂອງມະຕິຕົກລົງ ຂອງກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021.
2) ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກຂອງກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021.
3) ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານການເງິນລວມປະຈຳປີ 2022 ສິ້ນສຸດລົງໃນວັນທີ 31 ທັນວາ 2022, ເຊິ່ງເປັນ ບົດລາຍງານທີ່ໄດ້ຮັບການກວດສອບ ຈາກບໍລິສັດກວດສອບພາຍນອກ ກໍຄືບໍລິສັດ ເອີນແອນຢັ່ງລາວ ຈຳກັດ.
4) ວາລະທີ 4: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ບໍລິສັດ ພຣາຍສວໍເຕີເຮົ້າກຸບເປີ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບພາຍນອກ ປະຈຳປີ 2023.
5) ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາການຂຶ້ນເງິນເດືອນ ໃຫ້ກັບພະນັກງານບໍລິສັດ ລາວເວີນ ມະຫາຊົນທີ່ມີຂຶ້ນຕ່ຳແໜ່ງຕັ້ງແຕ່ລະດັບຫົວໜ້າພະແນກລົງໄປ.
6) ວາລະທີ 6: ພິຈາລະນາ ແລະ ຮັບຮອງການລາຍງານຜົນການດຳເນີນທຸລະກິດປະຈຳປີ 2022 ແລະ ພິຈາລະນາ ແລະ ຮັບຮອງເອົາແຜນປະຕິບັດງານປະຈຳປີ 2023 ຂອງບໍລິສັດລາວເວີນ ມະຫາຊົນ.
7) ວາລະທີ 7: ພິຈາລະນາ ແລະ ຮັບຮອງການຖອນຈົດທະບຽນຮຸ້ນຂອງບໍລິສັດອອກຈາກການເປັນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ.
8) ວາລະທີ 8: ເຫັນດີ ແລະ ຮັບຮອງເອົາ ການຈັດສັນກຳໄລສຸດທິ ປະຈຳປີ 2022 ເຂົ້າຄັງສຳຮອງຕ່າງໆ ທີ່ກຳນົດໄວ້ໃນກົດໝາຍ ແລະ ຈ່າຍເງິນປັນຜົນ.

ດັ່ງນຶ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານກອງປະຊຸມ

ບໍລິສັດ ລາວເວີນ ມະຫາຊົນ LAO WORLD PUBLIC COMPANY

ທັດນະຄອນ ທຳມະວົງ

Scanned with CamScanner